ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# "ຂະບວນການແຂ່ງຂັນກິລາບານເຕະຊາຍ ແລະ ກິລາມວນຊົນ ເພື່ອຊິງຂັນ ທ່ານ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ປະຈໍາປີ 2025."






ໃນວັນທີ 18 ມິຖຸນາ 2025 ຢູ່ທີ່ ເດີ່ນເຕະບານເຟີລາລີ້, ບ້ານ ຮ່ອງແກ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ທະນາຄານແຫ່ງ ສປປ ລາວ (ທຫລ), ໄດ້ຈັດຂະບວນການແຂ່ງຂັນກິລາບານເຕະຊາຍ ແລະ ກິລາມວນຊົນເພື່ອຊິງຂັນທ່ານ ຜູ້ວ່າການ ທຫລ ປະຈໍາປີ 2025 ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ນ. ຂັນແກ້ວ ຫຼ້າມະນີເງິາ ຄະນະປະຈໍາພັກ, ຮອງຜູ້ວ່າການ, ທຫລ, ທ່ານ ສຸລິສັກ ທໍານຸວົງ ກໍາມະການພັກ, ຮອງຜູ້ວ່າການ ທຫລ, ມີບັນດາກົມ, ທຽບເທົ່າກົມ, ບັນດາທະນາຄານທຸລະກິດ ທີ່ມີໜ່ວຍພັກ ແລະ ຄະນະພັກຮາກຖານທີ່ຂຶ້ນກັບອົງຄະນະພັກ ທຫລ ເຂົ້າຮ່ວມຫຼາຍກວ່າ 400 ທ່ານ.; ຊຶ່ງການແຂ່ງຂັນກິລາແບ່ງອອກເປັນ 02 ປະເພດ ຄື: (1) ບານເຕະຊາຍປະກອບມີ: 16 ທີມ, (2) ກິລາມວນຊົນ ປະກອບມີ: ບານເຕະຍິງ, ດຶງເຊືອກ ແລະ ກິລາແລ່ນໄຕ່ ຊຶ່ງຂະບວນການແຂ່ງຂັນຈະເລີ່ມນັບແຕ່ວັນທີ 18 ມິຖຸນາ ຫາ 26 ກໍລະກົດ 2025.

ຈຸດປະສົງຂອງການຈັດການແຂ່ງຂັນໃນຄັ້ງນີ້ ແມ່ນເພື່ອສ້າງຂະບວນການແຂ່ງຂັນກິລາ ເພື່ອເປັນການຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ V ຂອງອົງຄະນະພັກ ທຫລ ແລະ ວັນສໍາຄັນຕ່າງໆ ຂອງຊາດ-ຂອງພັກໃຫ້ມີຂະບວນການຟົດຟື້ນ ພ້ອມທັງເປັນການເສີມຂະຫຍາຍສາຍພົວພັນ ແລະ ຮັດແໜ້ນຄວາມສາມັກຄີຂອງສະມາຊິກພັກ-ພະນັກງານຢູ່ແຕ່ລະຮາກຖານ, ເພື່ອເພີ່ມທະວີຄວາມສາມັກຄີຮັກແພງໃຫ້ແກ່ພະນັກງານໃນທົ່ວລະບົບຂະແໜງການທະນາຄານ. ໃນພິທີ ທ່ານ ນ. ຂັນແກ້ວ ຫຼ້າມະນີເງິາ ຄະນະປະຈໍາພັກ, ຮອງຜູ້ວ່າການ ໃນນາມຕາງໜ້າຄະນະນໍາຂອງ ທຫລ ກໍ່ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ກັບກິດຈະກໍາຂະບວນການແຂ່ງຂັນກິລາດັ່ງກ່າວ ແລະ ເພື່ອສືບຕໍ່ກະກຽມດໍາເນີນກອງປະ

ຊຸມໃຫຍ່ 3 ຂັ້ນ ຢູ່ ອົງຄະນະພັກ ທຫລ ຕາມລະບຽບ-ຫຼັກການທີ່ກຳນົດໄວ້ເປັນຢ່າງດີ; ໃຫ້ເຕົ້າໂຮມຄວາມສາມັກຄີ ແລະ ປຸກລະດົມກຳລັງແຮງສັງລວມພາຍໃນຂະແໜງການ ເພື່ອນຳມາຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້.






ຂ່າວ: ຄະນະຮັບຜິດຊອບວຽກຂະບວນການແຂ່ງຂັນກິລາບານເຕະຊາຍ ແລະ ກິລາມອບຊິນ

ພາບ: ຫ້ອງການ ທຫລ

ຢູ່ເມືອງລາວໃຊ້ເງິນກີບລາວ